**ການບ້ານບົດທີ 6 ພາກຕົ້ນ**

# ງານຂອງໂປໂລໃນເມືອງໂກລິນໂທ

**1** ໃນການບ້ານບົດທີ 6 ນີ້ທັງພາກຕົ້ນແລະພາກປາຍ ເຮົາຈະຮຽນເລື່ອງເຫດການຕ່າງ ໆ ໃນເມື່ອໂປໂລຢູ່ໃນເມືອງໂກລິນໂທ. ເຮົາຈະຮຽນຈາກ

- ພະທຳກິດຈະການ
- ຈົດຫມາຍທີ່ໂປໂລຂຽນເຖິງຄຼິດສະຕະຈັກໃນເມືອງໂກລິນໂທທັງສອງສະບັບ
- ຈົດຫມາຍທີ່ໂປໂລຂຽນໄປຄຼິດສະຕະຈັກອື່ນ ໃນເມື່ອເວລາຢູ່ໂກລິນໂທ.

(ຄືເທຊະໂລນິກ ທັງສອງສະບັບ ເມື່ອໄປປະກາດພະທຳເທື່ອທີ 2
ແລະຈົດຫມາຍ ເຖິງໂລມໃນເທື່ອທີ 3)
ໃນເມືອງໂກລິນໂທ ໂປໂລມີບົດບາດ 3 ຢ່າງ:




ກ. ຮູບໃດສະແດງເຖິງໂປໂລປະກາດພະທຳ? ______________________________

ຂ. ຮູບໃດສະແດງເຖິງໂປໂລເປັນນັກຂຽນ? ______________________________

ຄ. ຮູບໃດສະແດງເຖິງໂປໂລເປັນຊ່າງເຮັດຜ້າເຕັນ? ___________________________

## ໂປໂລເປັນຊ່າງເຮັດຜ້າເຕັນ

(ກຈກ 18:1-2)

**2** ໂປໂລບໍ່ເຫັນຫຼາຍຄົນຮັບເຊື່ອໃນກຸງອາແຖນ

ກ. ດັ່ງນັ້ນເພິ່ນໄປເມືອງໃດ? (ກຈກ 18:1) ________________________________

ຂ. ເພິ່ນພົບສອງຜົວເມຍຊາວຢິວຊື່ຫຍັງ? (ກຈກ 18:2) ________________________

ຄ. ເຂົາຫາກໍມາຈາກປະເທດໃດ? (ກຈກ 18:2) ____________________________

ງ. ເຈົ້າຈັກກະພັດໃດ ສັ່ງໃຫ້ຊາວຢິວອອກໜີຈາກກຸງໂລມປະເທດອີຕາລີ? ___________

**3** ກ. ອາກີລາ ແລະປີຊະກີລາມີອາຊີບໃດ? (ກຈກ 18:3) _________________________

ຂ. ຜູ້ໃດອີກທີ່ເຮັດຜ້າເຕັນ? ________________________________________

**4** ໂປໂລບໍ່ຢາກຮັບເງິນຈາກຄຣິດສະຕະຈັກນອກຈາກເປັນການຈຳເປັນ.
ດັ່ງນັ້ນເພິ່ນດີໃຈເຮັດການຫາກິນ ດ້ວຍຕົນເອງ.

ກ. ໃນ 1 ກລທ 9:18 ເມື່ອໂປໂລປະກາດຂ່າວປະເສີດ ເພິ່ນບໍ່ໄດ້ຄິດຫຍັງ? ___________

ຂ. ເຊັ່ນດຽວກັນໃນເມືອງເທຊະໂລນິກ. ໃນ 2 ທຊນ 3:8 ໂປໂລບໍ່ໄດ້ແກ່ມຫຍັງ?

_______________________________________________________________

ຄ. ໂປໂລອອກເຫື່ອແຮງເຮັດການໜັກ ຫຼື ເບົາ? ______________________________

## ໂປໂລເປັນຜູ້ປະກາດພະທຳ

(ກຈກ 18:4-8)

**5** ໂປໂລຕັ້ງອາຊີບຂຶ້ນແລ້ວ ເພິ່ນໄປໂຈດຖຽງຢູ່ໃສທຸກວັນຊະບາໂຕ? (ກຈກ 18:4)

_______________________________________________________________

**6** ໃຫ້ອ່ານ 1 ກລທ 2:1-5

ກ. ໃນ ຂໍ້ 3 ເຫັນວ່າໂປໂລມີກຳລັງຢ່າງໃດໃນເມື່ອຢູ່ກັບເຂົາ? ___________________

ຂ. ໂປໂລຢ້ານຈົນຫຍັງ? _____________________________________________

ຄ. ໃນ ຂໍ້ 1 ໂປໂລບໍ່ໄດ້ໃຊ້ຖ້ອຍຄຳຢ່າງໃດ? _______________________________

ງ. ໃນ ຂໍ້ 2 ເຫັນວ່າໂປໂລສະແດງແຕ່ເລື່ອງພະເຢຊູຄຣິດ ແລະການທີ່ພະອົງຕາຍຢ່າງໃດ?

_______________________________________________________________

ຈ. ໃນ ຂໍ້ 4 ເຫັນວ່າໂປໂລບໍ່ໄດ້ເທດສະໜາຢ່າງສະຫຼາດສະຫຼຽວ
ແຕ່ເປັນທີ່ສະແດງລິດອຳນາດໃດ? ___________________________________

*ຄຳເທດສະໜາຂອງໂປໂລ ບໍ່ແມ່ນໂດຍສະຕິປັນຍາຂອງມະນຸດ ເພາະໂດຍຄວາມສະຫຼາດສະຫຼຽວ ຂອງໂປໂລເອງ ເພິ່ນເປັນຄົນທີ່ເວົ້າບໍ່ເປັນຕາຈັບໃຈຜູ້ຟັງ. ດັ່ງນັ້ນມີຜົນຮັບຍ້ອນອຳນາດຂອງພະວິນ ຍານຂອງພະເຈົ້າຢ່າງດຽວ!*

**7** ໂປໂລຮັບການບຳລຸງໃຈໃນການເທດສະໜາ. ພວກຊາວໂກລິນໂທຮັບຂ່າວດີເລື່ອງຜູ້ທີ່ຮັບເຊື່ອໃນ ເມືອງເທຊະໂລນິກ. ໃຫ້ອ່ານ 1 ທຊນ 1:7-10 ທີ່ໂປໂລຂຽນຈາກເມືອງໂກລິນໂທ.

ກ. ໃນຂໍ້ 7 ໂປໂລບອກວ່າ ເຂົາເປັນແບບຢ່າງແກ່ຄົນທັງປວງທີ່ເຊື່ອໃນສອງແຂວງໃດ?

______________________________________________

ຂ. ເມືອງໂກລິນໂທຢູ່ໃນແຂວງໃດ? ______________________________

**8** ເມື່ອໂປໂລເຂົ້າເມືອງໂກລິນໂທແລ້ວນັ້ນບໍ່ມີການລາຍງານຫຼາຍ.

ກ. ເຮົາຮູ້ຊື່ສອງຄົນທີ່ເຊື່ອແລ້ວໂປໂລເຮັດພິທີໃດໃຫ້ເຂົາ? (1 ກລທ 1:14) __________

ຂ. ສອງຄົນນັ້ນຊື່ຫຍັງ? ____________________________________

**9** ກີສະໂປມີຕຳແໜ່ງໃດ? (ກຈກ 18:8) ______________________________

**10** ຄາໂຍບໍ່ໄດ້ເປັນຊາດຢິວ ແຕ່ເປັນຄົນຕ່າງຊາດທີ່ຢຳເກງພະເຈົ້າ.

ກ. ແມ່ນໃຜທີ່ເຮັດພິທີຮັບບັບຕິສະມາແກ່ຄາໂຍ? ________________________

ຂ. ອີກຫຼາຍປີໂປໂລຂຽນຈົດໝາຍເຖິງຄຣິດສະຕະຈັກໃນກຸງໂລມ. ໃນເວລານັ້ນ ແມ່ນໃຜຮັບລ້ຽງໂປ ໂລ? (ໂລມ 16:23) ______________________________

ຄ. ແມ່ນໃຜທີ່ບຳລຸງຄຣິດສະຕະຈັກນັ້ນ? ______________________________

**11** ກ. ໃນພະທຳກິດຈະການ ຄົນດຽວກັນນັ້ນມີອີກຊື່ໜຶ່ງຄືຊື່ຫຍັງ? (ກຈກ 18:7) __________

ຂ. ເຮືອນຂອງເພິ່ນຢູ່ຖັດຕຶກໃດ? __________________________________

**12** ກ. ແຕ່ເມື່ອໂປໂລໄປເມືອງໂກລິນໂທບໍ່ມີໝູ່ຢູ່ນຳ. ໃນ ກຈກ 18:5 ເຫັນວ່າມີໃຜມາ?

______________________________________________

ຂ. ມາຈາກໃສ? _________________________________________

ຄ. ໂປໂລຝາກຄວາມໃຫ້ເຂົາມາຫາ ໃນເມື່ອຢູ່ກຸງໃດ? ______________________

ງ. ແຕ່ເຂົາມາບໍ່ທັນ. ສຸດທ້າຍເຂົາມາຮ່ວມກັບໂປໂລອີກໃນເມືອງໃດ? ____________

**13** ກ. ໃນບົດຮຽນກ່ອນ ໆ ນັ້ນ ເຮົາເຫັນພີ່ນ້ອງໃນຟີລິບປອຍຝາກຂອງມາຊ່ອຍໂປໂລເມື່ອໂປໂລຢູ່ເມືອງໃດ? (ຟລປ 4:16) ____________________________________

ຂ. ແລະພີ່ນ້ອງຟີລິບປອຍມີສ່ວນຮ່ວມກັບໂປໂລ ເມື່ອໄດ້ຈາກແຂວງໃດໄປ? (ຟລປ 4:15)__________________________________________

ຄ. ປາກົດວ່າຄວາມຊ່ວຍເຫຼືອນັ້ນມາເຖິງໂປໂລຫຼັງຈາກຕົກແຂວງອະຂາຢາ. ຖ້າຢ່າງນັ້ນ ອາດຈະ ແມ່ນສອງຄົນໃດທີ່ເອົາຄວາມຊ່ວຍເຫຼືອຈາກຟີລິບປອຍມາໃຫ້ໂປໂລ ເວລາຢູ່ແຂວງອະຂາຢາ? (ກຈກ 18:5) ____________________________________

**14** ກ. ຫຼັງຈາກຊີລາກັບຕີໂມທຽວມາຮ່ວມວຽກກັບໂປໂລໃນເມືອງໂກລິນໂທ ໂປໂລບໍ່ໃຊ້ເວລາຫຼາຍໃນການທຳພິທີໃດ? (1 ກລທ 1:14) ________________________________

ຂ. ອາດຈະແມ່ນວ່າໂປໂລມອບພາລະໃຫ້ສອງຄົນທີ່ມາຊ່ອຍວຽກ ຄືສອງຄົນໃດ? (ກຈກ 18:5)________________________________________________

ຄ. ໃນ 1 ກລທ 1:17 ໂປໂລບອກວ່າພະອົງໃຊ້ມາເຮັດພິທີບັບຕິສະມາ ຫຼືປະກາດຂ່າວປະເສີດ? ____________________________________________

ງ. ໃນ ກຈກ 18:5 ເຫັນວ່າໂປໂລຕັ້ງຕົ້ນເຮັດຫຍັງເຕັມເວລາ? ____________________

**15** ກ. ແມ່ນໃຜນຳຂ່າວດີມາຈາກພີ່ນ້ອງໃນເທຊະໂລນີກ? (1 ທຊນ 3:6) ______________

ຂ. ນຳຂ່າວດີຈາກເຂົາເລື່ອງຫຍັງແດ່? (1 ທຊນ 3:6) __________________________

ຄ. ໃນ 1 ທຊນ 3:10 ໂປໂລອ້ອນວອນທັງກາງເວັນແລະກາງຄືນວ່າຈະໄດ້ເຫັນໜ້າໃຜອີກ?

______________________________________________________________

*ໃຫ້ອ່ານຕະຫຼອດທັງວັກ 1 ທຊນ 3:6-11 ທີ່ໂປໂລ ບັນທຶກເລື່ອງເວລາພົບຊີລາກັບຕີໂມທຽວອີກ.*

## ໂປໂລເປັນນັກຂຽນຈົດໝາຍ

**16** ພໍດີ ເມື່ອລາກັບຕີໂມທຽວມາເຖິງເມືອງໂກລິນໂທ ເຂົາລາຍງານຂ່າວດີເລື່ອງພີ່ນ້ອງຄຼິດສະຕຽນໃນ ເທຊະໂລນີກ. ໂປໂລຮີບຮ້ອນຂຽນຈົດໝາຍກັບໄປຫາເຂົາໃນເມືອງເທຊະໂລນີກ.

ກ. ຈົດໝາຍນັ້ນມາຈາກ 3 ຄົນໃດ? (1 ທຊນ 1:1) __________________________

ຂ. ເຖິງຄຼິດສະຕະຈັກໃດ? ____________________________________________

ຄ. (ທວນຄືນ) ໂປໂລຂຽນຈົດໝາຍນີ້ຈາກເມືອງໃດ? _________________________

ງ. ໃນເທື່ອໃດທີ່ອອກໄປປະກາດ? ______________________________________

**17** ແຕ່ມີບາງຄົນທີ່ໂສກເສົ້າເລື່ອງຫຍັງ? (1 ທຊນ 4:13) _________________________

**18** ໃນ 1 ທຊນ 4:13-18 ໂປໂລປອບໃຈຄົນທີ່ໂສກເສົ້າຍ້ອນພີ່ນ້ອງທີ່ຕາຍໄປນັ້ນ.

ກ. ຈະມີສຽງຂອງອັກຄະເທວະດາກ່ອນ ແລະສຽງແກຂອງໃຜ? (1 ທຊນ 4:16) ________

ຂ. ແລ້ວອົງພະຜູ້ເປັນເຈົ້າຈະສະເດັດລົງມາຈາກໃສ? __________________________

ຄ. ຄົນທີ່ເຊື່ອໃນພະຄຼິດ ທີ່ຕາຍໄປແລ້ວຈະເປັນຢ່າງໃດ? ______________________

**19** ກ. ຫຼັງຈາກນັ້ນ ຄົນທີ່ຍັງມີຊີວິດຢູ່ ຈະຖືກຫຍັງ? (1 ທຊນ 4:17) __________________

ຂ. ຮັບຂຶ້ນໄປໃສກ່ອນ? _______________________________________________

ຄ. ພ້ອມກັບໃຜ? ____________________________________________________

ງ. ຈະພົບໃຜໃນຟ້າອາກາດ? ____________________________________________

ຈ. ຈະຢູ່ກັບພະຜູ້ເປັນເຈົ້ານັ້ນດົນປານໃດ? __________________________________

**20** ຂ່າວນັ້ນດີແທ້!

ກ. ໃນ 1 ທຊນ 4:18 ໂປໂລບອກວ່າ ຈົ່ງເຮັດຫຍັງຕໍ່ກັນແລະກັນ? ___________________

______________________________________________________________

ຂ. ຈົ່ງເລົ້າໂລມອອຍໃຈກັນແລະກັນ ເພາະຜູ້ໃດຈະສະເດັດກັບມາອີກ? ______________

*ຈົ່ງຮັບພິຈາລະນາ*

*ໃຫ້ອ່ານ 1 ທຊນ 4:13-18 ອີກເທື່ອໜຶ່ງ. ຖ້າເຫັນເພື່ອນໂສກເສົ້າຫຼາຍເພາະພີ່ນ້ອງຄຼິດສະ ຕຽນ ຫຼັບຕາລາໂລກແລ້ວ ທ່ານຈະເລົ້າໂລມເພິ່ນຢ່າງໃດ?*

**21** ທວນຄືນ!

ກ. ພີ່ນ້ອງຄຼິດສະຕຽນໃນເມືອງເທຊະໂລນິກ ເສົ້າໃຈເພາະຫຍັງ? ___________________

ຂ. ໂປໂລປອບໃຈເຂົາວ່າ ຜູ້ໃດຈະກັບມາອີກ? ________________________________

ຄ. ຈະເອົາທັງຄຼິດສະຕຽນທີ່ຕາຍແລະທີ່ຍັງມີຊີວິດຢູ່ຮັບຂຶ້ນໄປໃສ? _________________

**22** ທວນຄືນອີກ!

ໂປໂລຂຽນຈົດໝາຍໄປເຖິງຄຼິດສະຕະຈັກໃນເມືອງເທຊະໂລນິກ ເພື່ອເລົ້າລົມປອບໃຈຄົນທີ່ ໂສກເສົ້າ ເພາະເຫັນພີ່ນ້ອງເສຍຊີວິດ.

ກ. ໂປໂລຂຽນຈົດໝາຍເຖິງຄຼິດສະຕະຈັກໃນເທຊະໂລນິກ ຈາກບ່ອນໃດ? ____________

ຂ. ຂຽນໃນເວລາເດີນທາງໄປປະກາດເທື່ອໃດ? ________________________________

ຄ. ຂຽນຫຼັງຈາກສອງຄົນໃດ ນຳຂ່າວດີມາຈາກຄຼິດສະຕະຈັກເທຊະໂລນິກ? ____________

______________________________________________________________

ງ. ສອງຄົນນັ້ນ ເດີນທາງມາຈາກແຂວງໃດ? __________________________________

ຈ. ໃນພາກຮຽນຕໍ່ໄປ ເຮົາຈະຮຽນເລື່ອງຈົດໝາຍສະບັບທີສອງທີ່ໂປໂລຂຽນໄປເຖິງຄຼິດ ສະຕະຈັກເທ ຊະໂລນິກ. ເພິ່ນຂຽນທັງສອງສະບັບຈາກເມືອງດຽວ ຄືເມືອງໃດ? ______

______________________________________________________________

ຄຳຕອບ:

**1** *ກ. ຮູບ "ກ" ຂ. ຮູບ "ຂ" ຄ. ຮູບ "ຄ"*

**2** *ກ. ໂກລິນໂທ ຂ. ອາກິລາ ແລະ ປີຊະກີລາ ຄ. ອີຕາລີ ງ. ກລາວດີໂອ*

**3** *ກ. ເຮັດຜ້າເຕັ້ນ ຂ. ໂປໂລ*

**4** *ກ. ບໍ່ໄດ້ຄິດຄ່າ ຂ. ບໍ່ໄດ້ແກ່ມອາຫານການກິນກັບໃຜ ຄ. ຫນັກຫນ່ວງ*

**5** *ໃນໂຮງທຳ*

**6** *ກ. ອ່ອນກຳລັງ ຂ. ຕົນຕົວສັ່ນ ຄ. ອັນຫນ້າຟັງ ງ. ຖືກຄຶງໄວ້ທີ່ໄມ້ກາງແຂນ*
*ຈ. ພະວິນຍານ*

**7** *ກ. ມາເກໂດເນຍ ແລະອະຂາຢາ ຂ. ອະຂາຢາ*

**8** *ກ. ພິທີບັບຕິສະມາ ຂ. ກິສະໂປ ກັບ ຄາໂຍ*

**9** *ນາຍໂຮງທຳ*

**10** *ກ. ໂປໂລ ຂ. ຄາໂຍ ຄ. ຄາໂຍ*

**11** *ກ. ຕິຕີໂຍຢູຊະໂຕ ຂ. ໂຮງທຳ*

**12** *ກ. ຊີລາ ແລະ ຕີໂມທຽວ ຂ. ມາເກໂດເນຍ ຄ. ກຸງອາແຖນ ງ. ໂກລິນໂທ*

**13** *ກ. ເມື່ອຢູ່ເທຊະໂລນິກ ຂ. ແຂວງມາເກໂດເນຍ ຄ. ຊີລາກັບຕີໂມທຽວ*

**14** *ກ. ພິທີບັບຕິສະມາ ຂ. ຊີລາກັບຕີໂມທຽວ ຄ. ປະກາດຂ່າວປະເສີດ*
*ງ. ປະກາດພະທຳ*

**15** *ກ. ຕີໂມທຽວ ຂ. ຄວາມເຊື່ອ ແລະ ຄວາມຮັກ*
*ຄ. ເຫັນຫນ້າພີ່ນ້ອງເທຊະໂລນິກນັ້ນ*

**16** *ກ. ໂປໂລ,ຊີລາແລະຕີໂມທຽວ ຂ. ເທຊະໂລນິກ ຄ. ເມືອງໂກລິນໂທ*
*ງ. ທີສອງ*

**17** *ເລື່ອງຄົນທີ່ຕາຍແລ້ວ*

**18** *ກ. ຂອງພະເຈົ້າ ຂ. ຈາກສະຫວັນ ຄ. ຈະຄືນຂຶ້ນມາກ່ອນ*

**19** *ກ. ຖືກຮັບຂຶ້ນ ຂ. ໃນເມກ ຄ. ກັບພວກນັ້ນ (ທີ່ຂຶ້ນກ່ອນ)*
*ງ. ອົງພະຜູ້ເປັນເຈົ້າ ຈ. ຢູ່ເປັນນິດ*

**20** *ກ. ຈົ່ງເລົ້າໂລມອອຍໃຈກັນແລະກັນ ຂ. ພະເຢຊູ*

**21** *ກ. ມີຄູ່ດສະຫງບທີ່ເສຍຊີວິດ ຂ. ພະເຢຊູ ຄ. ໄປສະຫວັນ (ເມກກໍໄດ້)*

**22** *ກ. ຈາກໂກລິນໂທ ຂ. ເທື່ອທີສອງ ຄ. ຊີລາ ແລະຕີໂມທຽວ*
*ງ. ມາເກໂດເນຍ ຈ. ໂກລິນໂທ*

**ການບ້ານບົດທີ 6 ພາກປາຍ**

# ຄຼິດສະຕະຈັກໂກລິນໂທ ໃນເຮືອນຂອງຄາໂຢ

## ໂປໂລຂຽນຈົດໝາຍເທຊະໂລນິກທີສອງ

**1** ທວນຄືນ ຈາກການບ້ານພາກຕົ້ນ

ກ. ໂປໂລມີອາຊີບຫຍັງ? ______________________________

ຂ. ມີບາງຄົນໃນໂກລິນໂທທີ່ຮັບເຊື່ອໃນພະເຢຊູແລ້ວຮັບພິທີໃດ? ______________

ຄ. ມີສອງຄົນໃດທີ່ມາຮ່ວມວຽກກັບໂປໂລໃນເມືອງໂກລິນໂທ? ______________

ງ. ເຂົາເອົາຄວາມຊ່ວຍເຫຼືອມາຈາກຄຼິດສະຕະຈັກໃດ? ______________

ຈ. ຕີໂມທຽວມາກ່າວຂ່າວດີຈາກຄຼິດສະຕະຈັກໃດ? ______________

ສ. ໂປໂລຮັບຂ່າວດີນັ້ນ ແລ້ວແຕ່ຂຽນຈົດໝາຍສະບັບໃດ? ______________

**2** ໃນບົດຮຽນນີ້ ເຮົາຈະຮຽນອີກສອງເລື່ອງ:

1 .



ກ. ຮູບໃດຕໍ່ໄປນີ້ສະແດງເຖິງ ຄຣິດສະຕະຈັກທີ່ຮ່ວມປະຊຸມໃນເຮືອນຂອງຄາໂຢ? _______

ຂ. ຮູບໃດສະແດງເຖິງທີ່ໂປໂລຝາກຈົດຫມາຍສະບັບທີສອງໄປເທຊະໂລນິກ? _________

2 .




## ຄຣິດສະຕະຈັກໃນເຮືອນຂອງຄາໂຢ

(ກຈກ 18:5-8)

**3** ຄຣິດສະຕະຈັກໃນເມືອງໂກລິນໂທກ້າວຫນ້າໄປຫນ້ອຍໜຶ່ງແລ້ວ ພໍດີເກີດມີບັນຫາໃຫຍ່. ຄົນຢິວທີ່ບໍ່ເຊື່ອ ມາຕໍ່ຕ້ານ.

ກ. ໂປໂລຕັດສິນໃຈວ່າຈະໄປຫາພວກໃດ? (ກຈກ 18:6) ________________________

ຂ. ໂປໂລອອກຈາກໂຮງທຳ ເຂົ້າໄປໃນເຮືອນທີ່ຢູ່ຖັດຈາກຫຍັງ? (ກຈກ 18:7) _________

ຄ. ເຈົ້າຂອງເຮືອນນັ້ນຄື ຕີຕີໂຢຢູຊະໂຕ ມີຊື່ອີກວ່າຢ່າງໃດ? (ໂລມ 16:23) __________

ງ. ນາຍໂຮງທຳ ຊື່ຫຍັງ? (ກຈກ 18:8) _____________________________________

ຈ. ກີສະໂປນັ້ນຮັບເຊື່ອພ້ອມກັບໃຜ? (ກຈກ 18:8) ____________________________

**4** ທຸກຄົນກໍຮູ້ຢູ່ແລ້ວວ່າໂປໂລອອກຈາກໂຮງທຳ ເຂົ້າໄປເທດສະຫນາໃນເຮືອນຄາໂຢ. ແລ້ວຄົນຕ່າງໆ ຊາດຫຼາຍຄົນໄປຟັງ.

ກ. ຫຼາຍຄົນຮັບເຊື່ອແລະຮັບພິທີໃດ? (ກຈກ 18:8) ____________________________

ຂ. ສ່ວນຫຼາຍບໍ່ແມ່ນໂປໂລທີ່ທຳພິທີນັ້ນ ແຕ່ຍັງມີອີກສອງຄົນໃດທີ່ຊ່ອຍໄດ້? __________

## ໂປໂລຂຽນຈົດຫມາຍໄປເຖິງເທຊະໂລນິກສະບັບທີສອງ

**5** ຄຣິດສະຕະຈັກໃນເມືອງໂກລິນໂທກ້າວຫນ້າໄປເລື້ອຍໆ. ມີມື້ໜຶ່ງທີ່ເຂົາຮັບຂ່າວຈາກພີ່ນ້ອງໃນເມືອງເທຊະໂລນິກ. ໃຫ້ເປີດອ່ານ 2 ທຊນ 1:1-4.

ກ. ໂປໂລຮັບຂ່າວວ່າຄວາມເຊື່ອຂອງເຂົາເປັນຢ່າງໃດ? (2 ທຊນ 1:3) _____________

ຂ. ຄວາມຮັກຂອງເຂົາເປັນຢ່າງໃດ? ___________________________________

ຄ. ໂປໂລຈຶ່ງຂອບພະຄຸນໃຜ? ________________________________________

**6** ໃນ2 ທຊນ 1:4 ໂປໂລບອກວ່າ ເພິ່ນອວດໃນທ່າມກາງຄຣິດສະຕະຈັກຂອງພະເຈົ້າ ຍ້ອນຄວາມເຊື່ອຂອງພີ່ນ້ອງໃນເມືອງເທຊະໂລນິກ.

ກ. ເຂົາຖືກຫຍັງ? ____________________

ຂ. ເຂົາອົດທົນຕໍ່ຫຍັງ? ____________________

**7** ຮູ້ເລື່ອງເຂົາແລ້ວ ໂປໂລຂຽນຈົດຫມາຍສະບັບທີສອງນີ້

ກ. ຈາກໃຜ? (2 ທຊນ 1:1) ____________________

ຂ. ເຖິງຄຣິດສະຕະຈັກໃດ? ____________________

**8** ໂປໂລເວົ້າຢ່າງຮ້າຍແຮງກ່ຽວກັບເລື່ອງການພິພາກສາຕໍ່ຄົນທີ່ຂົ່ມເຫງຄຣິດສະຕຽນ. ໃຫ້ອ່ານ 2 ທຊນ 1:5-12

ກ. ຄົນທີ່ຂົ່ມເຫງພວກຄຣິດສະຕຽນຈະຖືກໂທດໃດເປັນນິດ? (2 ທຊນ 1:9) ____________

ຂ. ຈະຖືກແຍກຈາກໃຜ? (2 ທຊນ 1:9) ____________________

ຄ. ໃນເວລານັ້ນແມ່ນໃຜຈະຊົງປາກົດມາ? (2 ທຊນ 1:7) ____________________

ງ. ປາກົດມາຈາກໃສ? ____________________

ຈ. ມາໃນແປວໄຟຢ່າງໃດ? ____________________

ສ. ມາພ້ອມດ້ວຍຫມູ່ໃດ? ____________________

ຊ. ພະເຈົ້າຈະເອົາຫຍັງ ໄປຕອບແທນຄົນເຫຼົ່ານັ້ນ ທີ່ກໍ່ຄວາມລຳບາກໃຫ້ພວກຂອງພະອົງ? (2 ທຊນ 1:6) ____________________

**9** ໃນເວລານັ້ນ ພະອົງຈະໃຫ້ເປັນຄວາມນິຍົມຊົມຊື່ນແກ່ພວກໃດ? (2 ທຊນ 1:10) ________

____________________

**10** ກ. ທວນຄືນ: ໃນຈົດຫມາຍເທຊະໂລນິກສະບັບຕົ້ນນັ້ນ ໂປໂລກ່າວເລື່ອງການສະເດັດມາເທື່ອທີສອງ ຂອງພະເຢຊູເພື່ອປອບໃຈຄົນທີ່ໂສກເສົ້າ.
ເຂົາໂສກເສົ້າເລື່ອງຫຍັງ? ____________________

ຂ. ໃນ ສະບັບທີ 2 ນີ້ໂປໂລກ່າວເລື່ອງການສະເດັດມາເທື່ອທີສອງ ເພື່ອຫນຸນໃຈພີ່ນ້ອງຄຣິດສະຕຽນທີ່ຖືກຫຍັງ? ____________________

ຄ. ໃນທັງສອງສະບັບໂປໂລສອນເລື່ອງການສະເດັດມາຂອງໃຜອີກ? ______________

ງ. ໂປໂລຂຽນທັງສອງສະບັບນັ້ນຈາກເມືອງໃດ? ____________________

ຈ. ໃນເວລາອອກໄປກາດເທື່ອໃດ? ____________________

**11** ແຕ່ນອກຈາກການຂົ່ມເຫງ ຍັງມີບັນຫາອີກປະການໜຶ່ງເກີດຈາກຂ້າງໃນຄຣິດສະຕະຈັກເອງ. ມີຄົນໃນຄຣິດສະຕະຈັກ ທີ່ອ້າງວ່າວັນໃດມາເຖິງແລ້ວ? (2 ທຊນ 2:2) ______________

____________________

**12** ຖ້າຄົນໃດຄິດວ່າພະເຢຊູສະເດັດກັບມາແລ້ວ ຫຼືຈະກັບມາໃນອີກສອງສາມມື້ ເຂົາກໍບໍ່ຢາກເຮັດໄຮ່ ເຮັດນາຕໍ່ໄປ. ໃຫ້ອ່ານ 2 ທຊນ 3:6-12.

ກ. ມີບາງຄົນທີ່ຢູ່ນອກລະບຽບຢ່າງໃດ? (2 ທຊນ 3:10) ________________________

ຂ. ແຕ່ສ່ວນໂປໂລເອງ ເພິ່ນເຮັດຢ່າງໃດທັງກາງເວັນແລະກາງຄືນ? (2 ທຊນ 3:8)

____________________________________________________________

ຄ. ເພື່ອບໍ່ໃຫ້ຫຍັງ? ____________________________________________

ງ. ໃນເມື່ອໂປໂລຢູ່ຖ້າມກາງຊາວເທຊະໂລນິກນັ້ນ ເພິ່ນບໍ່ຂີ້ຄ້ານ ແລະບໍ່ໄດ້ຢູ່ນອກຫຍັງ? (2 ທຊນ 3:7) ____________________________________________

ຈ. ເມື່ອເວລາໂປໂລຍັງຢູ່ນຳພວກເຂົາ ເພິ່ນສັ່ງວ່າຜູ້ໃດບໍ່ມີນ້ຳໃຈຢາກເຮັດການຈະຖືກໂທດຢ່າງໃດ? (2 ທຊນ 3:10) ____________________________________

*ຈົ່ງພິຈາລະນາ*

*ໃຫ້ອ່ານ 2 ທຊນ 3:6-12 ອີກ. ມີບາງຄົນທີ່ຖືວ່າຄົນທີ່ຢູ່ໃກ້ຊິດກັບພະເຈົ້າຈະບໍ່ອອກກຳລັງຫນັກ ໃນການຫາກິນ. ມີພີ່ນ້ອງໃນຄຼິດສະຕະຈັກເທຊະໂລນິກທີ່ຄິດຢ່າງນັ້ນແລະອາດຈະມີບາງຄົນໃນສະໄຫມ ນີ້ທີ່ຄິດຢ່າງດຽວກັນ. ຄຳສອນຂອງໂປໂລໃນເລື່ອງນີ້ແຈ້ງດີ ແລະຍັງເປັນປະໂຫຍດໃນສະໄຫມນີ້ອີກ ດ້ວຍ. ໃຫ້ທ່ານຄິດເບິ່ງວ່າ ຈະເຕືອນພີ່ນ້ອງທີ່ຂີ້ຄ້ານຢ່າງໃດ? (ບໍ່ຕ້ອງຂຽນຄຳຕອບ)*

**13** ຄົນທີ່ຄິດວ່າພະເຢຊູສະເດັດກັບມາແລ້ວ ຫຼືຈວນຈະມາໃນເວລານັ້ນແມ່ນຄິດບໍ່ຖືກ. ໂປໂລບອກວ່າ ຈະມີ ເຫດການສຳຄັນສອງປະການມາກ່ອນ. ໃຫ້ອ່ານ 2 ທຊນ 2:1-12.

ກ. ຈະມີການຢ່າງໃດເກີດຂຶ້ນເສຍກ່ອນ? (2 ທຊນ 2:3) ________________________

ຂ. ໃຜຈະອອກມາປາກົດກ່ອນ? ________________________________________

**14** ເບິ່ງຄືວ່າ "ຜູ້ຊົ່ວຮ້າຍ" ນັ້ນເປັນອັນດຽວກັບ "ຜູ້ຕໍ່ສູ້ພະຄຼິດ" ແລະ "ພະຄຼິດທຽມ" ເຫັນໃນພະທຳອື່ນ ໆ

ກ. ຄົນນັ້ນຈະສະແດງຕົວເປັນເຫມືອນໃຜ? (2 ທຊນ 2:4) ______________________

ຂ. ຈະມາດ້ວຍການດົນບັນດານຂອງໃຜ? (2 ທຊນ 2:9) ________________________

ຄ. ຈະມາດ້ວຍຫຍັງທີ່ຫຼອກລວງ? (2 ທຊນ 2:9) ____________________________

ງ. ຈະມີອຸບາຍຢ່າງໃດ? (2 ທຊນ 2:10) ________________________________

ຈ. ອຸບາຍນັ້ນສຳລັບຄົນພວກໃດ? (2 ທຊນ 2:10) ___________________________

**15** ແຕ່ຜູ້ທີ່ໄວ້ວາງໃຈໃນພະເຢຊູບໍ່ຕ້ອງຢ້ານ

ກ. ແມ່ນໃຜຈະປະຫານມັນເສຍ? (2 ທຊນ 2:8) ______________________________

ຂ. ດ້ວຍລົມໃດ? ____________________________________________________

**16** ຖ້າພວກຜູ້ທີ່ສອນບໍ່ຈິງນັ້ນ ຢາກຊັກຊວນໃຫ້ເຂົາເຊື່ອແທ້ ເຂົາອາດຈະອ້າງວ່າເປັນຄໍາສັ່ງຈາກໂປໂລເອງ.

ໃນຕອນສຸດທ້າຍຂອງ 2 ທຊນ 2:2 ເບິ່ງຄືມີຄົນຂຽນຈົດໝາຍປອມວ່າມາຈາກໂປໂລ.

ກ. ເຂົາອ້າງຜິດຢ່າງໃດກ່ຽວກັບວັນຂອງພະຜູ້ເປັນເຈົ້າ? ____________________

ຂ. ທໍາມະດາໂປໂລໃຫ້ຜູ້ອື່ນຂຽນຈົດໝາຍ ແຕ່ເພື່ອຫຼີກເວັ້ນຈາກການປອມ ເພິ່ນຈົບລົງດ້ວຍເຊັນ ຊື່ຂອງຕົວເອງ. ໃຫ້ອ່ານ 2 ທຊນ 3:17 ຄວາມຄໍານັບທີ່ສຸດທ້າຍນັ້ນເປັນລາຍມືໃຜ?

*ຈົ່ງພິຈາລະນາ*

*ໃຫ້ອ່ານ 2 ທຊນ 2:13-17 ເຖິງແມ່ນຈົດໝາຍທີ່ໂປໂລຂຽນໄປຫາຄຣິດສະຕະຈັກເທຊະໂລນິກກໍຕາມ ແຕ່ຍັງເປັນຄໍາທີ່ເປັນປະໂຫຍດຫຼາຍໃນຄຣິດສະຕະຈັກເຮົາທຸກວັນນີ້.*

ຄຳຕອບ:

**1** *ກ. ເຮັດຜ້າເຕັນ*
*ຂ. ບັບຕິສະມາ*
*ຄ. ຊີລາ ແລະ ຕີໂມທຽວ*
*ງ. ຟີລິບປອຍ*
*ຈ. ເທຊະໂລນິກ*
*ສ. ເທຊະໂລນິກ (ທີ 1)*

**2** *ກ. 1 ຂ. 2*

**3** *ກ. ພວກຕ່າງຊາດ ຂ. ໂຮງທຳ ຄ. ຄາໂຢ ງ. ກີສະໂປ*
*ຈ. ກັບທັງຄົວເຮືອນຂອງຕົນ*

**4** *ກ. ບັບຕິສະມາ ຂ. ຊີລາ ແລະຕີໂມທຽວ*

**5** *ກ. ຈະເລີນຫຼາຍຂຶ້ນ ຂ. ທະວີຂຶ້ນຢ່າງຫຼວງຫຼາຍ ຄ. ພະເຈົ້າ*

**6** *ກ. ຂົ່ມເຫງ ຂ. ຄວາມທຸກລຳບາກ*

**7** *ກ. ໂປໂລ ກັບຊີລາວານ ແລະຕີໂມທຽວ ຂ. ເທຊະໂລນິກ*

**8** *ກ. ຄວາມວິນາດຈິບຫາຍ ຂ. ຈາກພະຜູ້ເປັນເຈົ້າ ຄ. ພະເຢຊູ*
*ງ. ຈາກຟ້າສະຫວັນ ຈ. ອັນຮ້ອນກ້າ ສ. ຫມູ່ເທວະດາ*
*ຊ. ເອົາຄວາມລຳບາກໃຫ້ແກ່ເຂົາ*

**9** *ຄົນທັງປວງທີ່ໄດ້ເຊື່ອ*

**10** *ກ. ເລື່ອງພີ່ນ້ອງທີ່ເສຍຊີວິດໄປ ຂ. ຖືກຂົ່ມເຫງ ຄ. ພະເຢຊູ ງ. ໂກລິນໂທ*
*ຈ. ທີສອງ*

**11** *ວັນຂອງອົງພະຜູ້ເປັນເຈົ້າມາເຖິງແລ້ວ*

**12** *ກ. ບໍ່ມີນ້ຳໃຈຢາກເຮັດການ ຂ. ອອກເຫື່ອແຮງເຮັດການ*
*ຄ. ບໍ່ໃຫ້ເປັນພາລະອັນຫນັກແກ່ຜູ້ໜຶ່ງຜູ້ໃດ ງ. ບໍ່ໄດ້ຢູ່ນອກລະບຽບ ຈ. ຢ່າໃຫ້ຜູ້ນັ້ນກິນ*

**13** *ກ. ການທຳລະຍົດ ຂ. ຜູ້ຊົ່ວຮ້າຍ*

**14** *ກ. ພະເຈົ້າ ຂ. ຊາຕານ ຄ. ຫມາຍສຳຄັນກັບການອັດສະຈັນ*
*ງ. ອັນຊົ່ວຮ້າຍ ຈ. ທີ່ກຳລັງຈິບຫາຍໄປ*

**15** *ກ. ພະເຢຊູ ຂ. ລົມພະໂອດຂອງພະອົງ*

**16** *ກ. ອ້າງວ່າມາເຖິງແລ້ວ ຂ. ໂປໂລ*

## ໃນການປະຊຸມບົດທີ 6

# ໂປໂລຂຽນປອບໃຈຄຶດສະຕຽນເລື່ອງພະອົງຈະສະເດັດມາ

*ໃນພະທຳເທຊະໂລນິກທັງສອງສະບັບ ກ່າວເລື່ອງການສະເດັດມາຂອງພະເຢຊູ ເຮົາຈະຮຽນເລື່ອງນີ້ໃນ 3 ຕອນຈາກພະຄຳພີເທຊະໂລນິກ ຄື:*

- *1 ທຊນ 4:13-18*
- *2 ທຊນ 2:1-10*
- *1 ທຊນ 5:1-8*

## ໃຫ້ອ່ານ 1 ທຊນ 4:13-18

**1** ໃນເມື່ອໂປໂລຂຽນ ເທຊະໂລນິກສະບັບຕົ້ນມີບັນຫາທີ່ເຮັດໃຫ້ພີ່ນ້ອງຄຶດສະຕຽນເຫຼົ່ານັ້ນເສົ້າໃຈຫນັກ.

ກ. ເສົ້າໃຈຍ້ອນຫຍັງ? ______________________________________________

ຂ. ໃນ 1 ທຊນ 4:14 ໂປໂລປອບໃຈເຂົາດ້ວຍບອກສອນຫຍັງ? __________________

________________________________________________________________

| |
|---|
| ໃຫ້ທ່ານຂີດກ້ອງຂໍ້ 13 ແລະຂໍ້ 18 ແລ້ວຂີດເສັ້ນຈາກຂໍ້ 13 ນັ້ນ<br>ລົງມາຕໍ່ກັບຂໍ້ 18 ໃສ່ຂອບເຈ້ຍ. |

**2** ກ. ໂປໂລບອກຢ່າງນັ້ນຕາມພະທຳຂອງໃຜ? (ຂໍ້ 15) __________________________

ຂ. ເລື່ອງຄົນທີ່ຍັງມີຊີວິດຢູ່ໃນເວລານັ້ນ ຈະໄປກ່ອນຄົນທີ່ຕາຍຫຼືທີຫຼັງ? (ຂໍ້ 15) ________

**3** "ວັນຂອງອົງພະຜູ້ເປັນເຈົ້າ" ຫມາຍເຖິງວັນທີ່ພະເຢຊູຈະສະເດັດມາອີກ.

ກ. ຈະມີປາກົດການ 3 ປະການໃດກ່ອນພະອົງຈະສະເດັດລົງມາຈາກສະຫວັນ? (ຂໍ້ 16)

________________________________________________________________

ຂ. ຄົນທີ່ເຊື່ອໃນພະຄຶດທີ່ຕາຍໄປແລ້ວຈະເປັນຢ່າງໃດ? (ຂໍ້ 16) __________________

ຄ. ຫຼັງຈາກນັ້ນເຮົາທັງຫຼາຍຜູ້ມີຊີວິດຈະເປັນຢ່າງໃດ? (ຂໍ້ 17) ____________________

ງ. ຜົນສຸດທ້າຍທັງຄົນເປັນແລະຄົນຕາຍຈະເປັນຢ່າງໃດ(ຂໍ້ 17)? _________________

**4** ໃຫ້ອ່ານ 1 ທຊນ 4:15-17 ດີ ໆ ແລ້ວປິດພະຄຳພີ. ໃຫ້ແຕ່ລະຄົນກ່າວເລື່ອງຢ່າງເປັນ ກັນເອງຫຼືຢ່າງຜູ້ລາຍງານຂ່າວວິທະຍຸ. ໃຫ້ຫມູ່ວັດຜົນວ່າຂາດປະການໜຶ່ງປະການໃດບໍ່?

________________________________________________________________

| |
|---|
| ໃຫ້ຂຽນຄຳວ່າ "ມາອີກ" ໃສ່ຂອບເຈ້ຍຂ້າງ 1 ທຊນ 4:16-17<br>ເພື່ອໃຫ້ທ່ານຊອກຫາໄດ້ງ່າຍໃນ. |

*ໃຫ້ກັບໄປເບິ່ງຕອນ "ຈົ່ງຮັບພິຈາລະນາ" ເປັນຕົວອັກສອນເນີ້ງ ໃນການບ້ານບົດທີ 6 ພາກຕົ້ນ ຫຼັງຈາກຄຳຖາມ 20 (ໜ້າ 74). ແລ້ວແລກປ່ຽນຄວາມຄິດເຫັນໃນເລື່ອງນັ້ນ.*

## ໃຫ້ອ່ານ 2 ທຊນ 2:1-10

**5** ໃນການບ້ານບົດທີ 6 ພາກປາຍ ເຮົາຮຽນວ່າມີບາງຄົນໃນຄຣິດສະຕະຈັກເທຊະໂລນິກ ທີ່ເຂົ້າໃຈບໍ່ຖືກ ເລື່ອງທີ່ພະເຢຊູຈະສະເດັດມາອີກ. ອາດຈະມີຄົນທີ່ປອມຈົດໝາຍຂອງໂປໂລ ເພາະເຫດນັ້ນໂປໂລຈຶ່ງຂຽນມາອີກ ແລ້ວເຊັນຊື່ເອົາເອງເພື່ອພີ່ນ້ອງຈະເຫັນຮູ້ລາຍມືຂອງໂປໂລ. ພີ່ນ້ອງນັ້ນເຂົ້າໃຈ ຜິດເລື່ອງຫຍັງ? ________________________________

| ໃຫ້ທ່ານຂີດກ້ອງ 2 ທຊນ 2:2 ແລ້ວຂຽນຄຳວ່າ "ມາອີກ" ໃສ່ຂອບເຈ້ຍຂ້າງຂໍ້ນັ້ນ |
|---|

**6** ຈະມີເຫດການສອງປະການໃດເກີດຂຶ້ນກ່ອນພະເຢຊູຈະສະເດັດມາອີກ? ____________

____________________________________________________________

| ໃຫ້ຂີດອ້ອມຄຳວ່າ "ຜູ້ຊົ່ວຮ້າຍ" ໃນ 2 ທຊນ 2:3 |
|---|

**7** ພວກເຮົາຍັງບໍ່ທັນຮູ້ເທື່ອວ່າ "ຜູ້ຊົ່ວຮ້າຍ" ນັ້ນຄືໃຜ. (ອາດຈະແມ່ນຄົນດຽວກັນກັບ "ພະຄຣິດທຽມ" ໃນ ມທ 24:24 ແລະມາລະໂກ 13:22 ແລະອີກມີ "ຜູ້ຕໍ່ສູ້ພະຄຣິດ" ໃນ 1 ໂຢຮັນ 2:18 1 ໂຢຮັນ 4:3 ແລະ 2 ໂຢຮັນ ຂໍ້ 7). ຄົນຊົ່ວຮ້າຍນັ້ນຈະເຮັດຫຍັງ? ________________

____________________________________________________________

**8** ກ. ເປັນຫຍັງຜູ້ຊົ່ວຮ້າຍບໍ່ປາກົດມາເທື່ອ? (ຂໍ້ 6) ____________________________
ຂ. ຈະໜ່ວງໄວ້ດົນປານໃດ? (ຂໍ້ 7) ____________________________________

**9** ກ. ຜູ້ຊົ່ວຮ້າຍຈະມາດ້ວຍການດົນບັນດານຈາກໃຜ? (ຂໍ້ 9) ______________________
ຂ. ຈະມາດ້ວຍໝາຍສຳຄັນກັບການໃດ? __________________________________



**10** ມີຄຳສຸພາສິດທີ່ວ່າ "ມືດມິດກ່ອນຟ້າສະຫວ່າງ" ເຊັ່ນດຽວຄວາມຮ້າຍທີ່ສຸດຈະມາກ່ອນພະເຢຊູສະເດັດມາອີກ.
ພະເຢຊູຈະເຮັດຫຍັງກັບຜູ້ຊົ່ວຮ້າຍນັ້ນ? (ຂໍ້ 8) ______________________________

| 2 ທຊນ 2:8 ເປັນຂໍ້ສຳຄັນທີ່ສຸດ ດັ່ງນັ້ນໃຫ້ຂີດກ້ອງທັງຂໍ້ ແລ້ວຂຽນຄຳວ່າ "ມາອີກ" ໃສ່ຂ້າງ. |
|---|

## ໃຫ້ອ່ານ 1 ທຊນ 5:1-8



**11** ກ. ເປັນຫຍັງເຈົ້າຂອງບ້ານໃນຮູບນີ້ ບໍ່ສັງເກດ ວ່າ
ຂະໂມຍເຂົ້າໃນເຮືອນ? ______________

ຂ. ເປັນຫຍັງໂລກບໍ່ຮູ້ວ່າພະເຢຊູຈະກັບມາອີກ.
(ຂໍ້ 6) ____________________________

ຄ. ຄົນທີ່ນອນກໍນອນໃນເວລາໃດ? (ຂໍ້ 7) __________________________________

**12** ກ. ກ່ອນທີ່ພະເຢຊູຍັງບໍ່ທັນມາ ຄຣິດສະຕຽນຢູ່ຝ່າຍກາງເວັນຫຼືກາງຄືນ?(ຂໍ້ 5 ແລະ 8) _____
______________________________________________________________

ຂ. ຜູ້ທີ່ບໍ່ເຊື່ອຢູ່ຝ່າຍໃດ? (ຂໍ້ 2 4 ແລະ 7) __________________________________

**13** ກ. ຫຼັງຈາກພະອົງສະເດັດມາອີກ ຜູ້ທີ່ເຊື່ອຈະເປັນຢ່າງໃດ ?? (1 ທຊນ 4:17)
______________________________________________________________

ຂ. ຄົນທີ່ບໍ່ເຊື່ອໃນພະອົງຈະເປັນຢ່າງໃດ? (1 ທຊນ 5:3) ________________________

*ໃຫ້ແລກປ່ຽນຄວາມເຫັນກັບຫມູ່ໃນເລື່ອງຕໍ່ໄປນີ້: (ບໍ່ຕ້ອງຂຽນຄຳຕອບ)*

- *ຄິດວ່າພະເຢຊູຈະກັບມາອີກ ກ່ອນທີ່ທ່ານຈະຫຼັບຕາລາໂລກໄປບໍ່?*
- *ຖ້າພະອົງກັບມາ ຍາດພີ່ນ້ອງແລະເພື່ອນບ້ານຂອງທ່ານຈະຖືກຈົບຫາຍ ຫຼືຈະຂຶ້ນສະຫວັນ?*
- *ແມ່ນພາລະຂອງໃຜທີ່ຈະເຕືອນເຂົາໃຫ້ຮູ້?*
- *ຖ້າເຮົາເຊື່ອວ່າພະອົງຈະກັບມາໃນບໍ່ຊ້ານີ້ ເຮົາຄວນເປັນພະຍານຢ່າງໃດ?*

| |
|---|
| ໃຫ້ທ່ານຂີດກ້ອງຫົວຂໍ້ 1 ທຊນ ບົດທີ 5 ທີ່ວ່າ "ຈົ່ງຈັດຕຽມພ້ອມພຽງກັນ ເມື່ອພະເຢຊູສະເດັດກັບມາ" (ຄືຕົວອັກສອນໃຫຍ່) |

*ໃຫ້ຄົນໜຶ່ງອ່ານໂລມ 13:11-14 ໃຫ້ຫມູ່ຟັງ ແລະອ້ອນວອນຮ່ວມກັນຂໍໃຫ້ພະເຈົ້າຊ່ວຍເຮົາ ເພື່ອເຕືອນຜູ້ອື່ນໃຫ້ຮູ້ວ່າພະເຢຊູຈະສະເດັດກັບມາໄວ ໆ ນີ້.*

ຄຳຕອບ:

**1** *ກ. ມີພີ່ນ້ອງຄຣິດສະຕຽນບາງຄົນທີ່ເສຍຊີວິດແລ້ວ*
*ຂ. ເມື່ອພະອົງສະເດັດມາອີກ ຈະເອົາຄຣິດສະຕຽນທີ່ຕາຍຄືນມາ*

**2** *ກ. ຂອງອົງພະຜູ້ເປັນເຈົ້າ ຂ. ຈະໄປທີຫຼັງ*

**3** *ກ. ຄຳສັ່ງອັນດັງ ສຽງຂອງອັກຄະເທວະດາ ແລະສຽງແກຂອງພະເຈົ້າ*
*ຂ. ຈະຄືນຂຶ້ນມາກ່ອນ ຄ. ຈະຖືກຮັບຂຶ້ນຢູ່ໃນເມກ*
*ງ. ຈະຢູ່ນຳພະຜູ້ເປັນເຈົ້າເປັນນິດ*

**4** *(ບໍ່ມີຄຳຕອບຕາຍຕົວ)*

**5** *ເຂົ້າໃຈຜິດວ່າວັນຂອງອົງພະຜູ້ເປັນເຈົ້າມາເຖິງແລ້ວ (ພະອົງສະເດັດມາເທື່ອທີສອງແລ້ວ)*

**6** *ຈະມີການທໍລະຍົດເກີດຂຶ້ນເສຍກ່ອນ ແລະຜູ້ຊົ່ວຮ້າຍຈະອອກມາປາກົດ (ຂໍ້ 3)*

**7** *ຍົກຕົວຂຶ້ນຕໍ່ສູ້ທຸກ ໆ ສິ່ງທີ່ມີຊື່ວ່າເປັນພະ .... ຈະໄດ້ນັ່ງລົງໃນພະວິຫານຂອງພະເຈົ້າ*
*ສະແດງຕົວເປັນເຫມືອນພະເຈົ້າ. (ຂໍ້ 4)*

**8** *ກ. ມີສິ່ງທີ່ຫນ່ວງມັນໄວ້ໃນເວລານີ້ ຂ. ຈົນຈະໄດ້ອອກໄປ*

**9** *ກ. ຊາຕານ ຂ. ການອັດສະຈັນ*

**10** *ຈະປະຫານມັນເສຍ*

**11** *ກ. ເພິ່ນຫຼັບຢູ່ ຂ. ເຂົາຫຼັບ (ດ້ານວິນຍານ) ຄ. ກາງຄືນ*

**12** *ກ. ຝ່າຍກາງເວັນ ຂ. ກາງຄືນ*

**13** *ກ. ຈະຢູ່ນຳພະເຈົ້າເປັນນິດ ຂ. ຈະພິນາດຈິບຫາຍ*